# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກແຂວງຫົວພັນຄັ້ງທີ່ 12 ສະໄໝທີX

ກອງປະຊຸມຄົບຄະນະບໍລິຫານງານພັກແຂວງຫົວພັນຄັ້ງທີ 12 ສະໄໝທີ X ຂອງອົງຄະນະພັກແຂວງຫົວພັນໄດ້ໄຂຂຶ້ນໃນເວລາ 8:00' ຂອງວັນທີ 27-28 ທັນວາ 2023 ທີ່ຫ້ອງປະຊຸມຫ້ອງວ່າການແຂວງ( ຫໍແກ້ວ)ພາຍໃຕ້ການເປັນປະທານຂອງ ສະຫາຍ ປອ ຄຳແພງ ໄຊສົມແພງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ກອງປະຊຸມໄດ້ຕີລາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ອົງຄະນະພັກແຂວງສະໄໝທີ X ໃນ 1 ປີ ແລະ ວາງທິດທາງແຜນການ ເດືອນ ( 1-2-3) 2024.ໃນທ່າມກາງທີ່ສະພາບການຂອງພາກພື້ນ ແລະ ສາກົນສືບຕໍ່ມີການຜັນແປໄປຢ່າງສັບສົນ, ສຳລັບປະເທດເຮົາ ໄດ້ປະເຊີນໜ້າກັບສະພາບຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ລາຄາສິນຄ້າ,ຄ່າຄອງຊີບ, ນ້ຳມັນເຊື້ອໄຟໄດ້ມີການປັບຕົວສູງຂຶ້ນ,ໄພທຳມະຊາດ ແລະ ອື່ນໆ ທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນບັນດາເຜົ່າທີ່ເປັນສິ່ງທີ່ທ້າທາຍທົດສອບຕໍ່ບົດບາດການນຳພາຂອງອົງຄະນະພັກພວກເຮົາ, ແຕ່ດ້ວຍຄວາມຮັບຜິດຊອບສູງ ຂອງຄະນະພັກແຕ່ລະຂັ້ນໄດ້ສືບຕໍ່ນຳໃຊ້ທຸກເງື່ອນໄຂເພື່ອອຳນວຍຄວາມສະດວກ, ແກ້ໄຂຂອດອັດຕັນການພັດທະນາ ແລະ ມີຜົນສຳເລັດ ເຊິ່ງສະແດງອອກດັ່ງນີ້:

**I.ຕີລາຄາການຈັດຕັ້ງປະຕິບັດມະຕິ X ຂອງອົງຄະນະພັກແຂວງໃນໄລຍະ 1 ປີຜ່ານມາ.**

**1.ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:** ໂດຍປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ເຮັດໃຫ້ແຂວງຫົວພັນ ພວກເຮົາມີຄວາມສະຫງົບປອດໄພ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເອົາໃຈໃສ່ສະກັດກັ້ນປະກົດການຫຍໍ້ທໍ້ທາງສັງຄົມ ເປັນຕົ້ນແມ່ນການຄ້າເຖື່ອນ, ການປູກຝິ່ນ,ອາດຊະຍາກຳ, ການຄ້າມະນຸດ, ອຸປະຕິເຫດຕາມທ້ອງຖະໜົນ, ການໂຄສະນາໃສ່ຮ້າຍປ້າຍສີຕໍ່ແນວທາງການນຳພາຂອງພັກແລະອື່ນໆ, ສາມາດສະກັດກັ້ນແກ້ໄຂຫົ່ວແໜງຄວາມບໍ່ສະຫງົບທັນກັບສະພາບການ, ຕ້ານ, ສະກັດກັ້ນ ແລະ ທັບມ້າງກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ; ປັບປຸງກຳລັງຂອງແຂວງ, ຂອງເມືອງ, ກອງຫຼອນ, ປກສ ກຸ່ມບ້ານ ແລະ ບ້ານໃຫ້ມີຄວາມເຂັ້ມແຂງສາມາດຕ້ານ ແລະ ສະກັດກັ້ນການເຄື່ອນໄຫວຂອງກຸ່ມຄົນບໍ່ດີທີ່ຫວັງມ້າງເພທຳລາຍ ແຂວງຫົວພັນ. ໃນໜຶ່ງປີຜ່ານມາເຫັນໄດ້ວ່າປະຊາຊົນບັນດາເຜົ່າແຂວງຫົວພັນ ຍັງຮັກສາໄດ້ມູນເຊື້ອປະຕິວັດ, ມີແນວຄິດອຸ່ນອຽນ, ມີສະຕິຕື່ນຕົວເຂົ້າຮ່ວມໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບປົກປັກຮັກສາທ້ອງຖິ່ນຂອງຕົນອັນທີ່ພົ້ນເດັ່ນແມ່ນສາມາດສ້າງບ້ານປ້ອງກັນຊາດເຂັ້ມແຂງໄດ້ 35 ບ້ານ ມີ 3.524 ຄອບຄົວ; ປີ 2023 ສາມາດປະກາດບ້ານປ້ອງກັນຄວາມສະຫງົບດີທັງໝົດ 110 ບ້ານ, ມີ 6.886 ຄອບຄົວ.

**2.ດ້ານເສດຖະກິດ:** ເສດຖະກິດມີການຂະຫຍາຍຕົວຕໍ່ເນື່ອງ ໃນປີ 2023ລວມຍອດຜະລິດຕະພັນພາຍໃນ GDP ບັນລຸ 4.753,15 ຕື້ກີບ ລາຍໄດ້ສະເລ່ຍຕໍ່ຫົວຄົນໄດ້ 15.381.677 ກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 892ໂດລາສະຫະລັດ ຕໍ່ຄົນຕໍ່ປີ ດ້ວຍອັດຕາການຂະຫຍາຍຕົວທາງດ້ານເສດຖະກິດຢູ່ໃນລະດັບ 4,16% ທຽບໃສ່ແຜນການປີຍັງບໍ່ທັນບັນລຸ 0,47%,ຄວາມທຸກຍາກຕາມດຳລັດ 348/ລບ ທົ່ວແຂວງຍັງມີຄອບຄົວທຸກຍາກ 25.411ຄອບຄົວ ກວມເອົາ 48,70%ຂອງຄອບຄົວທັງໝົດ.ໃນ 1 ປີຜ່ານມາໄດ້ເອົາໃຈໃສ່ຊຸກຍູ້ການຜະລິດສະບຽງອາຫານ ແລະ ຜະລິດກະສິກຳຕິດພັນກັບການປຸງແຕ່ງຊົມໃຊ້ພາຍໃນແຂວງ ແລະ ສົ່ງອອກປະຈຸບັນທົ່ວແຂວງ ມີເນື້ອທີ່ປູກຝັງທັງໝົດ 72.829 ເຮັກຕາ ເກັບກ່ຽວຜົນຜະລິດໄດ້ 468.757 ໂຕນ ທຽບໃສ່ແຜນການປີປະຕິບັດໄດ້ລື່ນຄາດໝາຍ 56,75% ໃນນີ້: ມີເນື້ອທີ່ປູກເຂົ້າທັງໝົດ 31.417 ເຮັກຕາເກັບກ່ຽວຜົນຜະລິດໄດ້116.213 ໂຕນ ທຽບໃສ່ແຜນການປີປະຕິບັດໄດ້ 99,20%,ປູກພືດເປັນສິນຄ້າ 35.310 ເຮັກຕາຜົນຜະລິດໄດ້ 317.516 ໂຕນເຊັ່ນ: ສາລີ, ມັນຕົ້ນ, ຂີງໃຫຍ່, ມັນສະຫຼູ ແລະ ພືດອື່ນໆຈຳນວນໜຶ່ງໃນນີ້ພົ້ນເດັ່ນກ່ອນໝູ່ແມ່ນ ເມືອງຫົວເມືອງ, ເມືອງຮ້ຽມ, ເມືອງຊ່ອນ, ເມືອງຊຳເໜືອ, ເມືອງຊຽງຄໍ້, ເມືອງສົບເບົາ ແລະ ເມືອງແອດ; ໄດ້ນຳພາ-ຊີ້ນຳທົດລອງຂຸດຄົ້ນ ແລະ ສົ່ງອອກແຮ່

ບາງປະເພດເຊັ່ນ: ແຮ່ເຫຼັກໄດ້ 92.223,06 ໂຕນລວມເປັນມູນຄ່າ7,19 ລ້ານໂດລາສະຫະລັດ,ແຮ່ຫາຍາກໄດ້6.120,41 ໂຕນລວມເປັນມູນຄ່າ 25, 84 ລ້ານໂດລາສະຫະລັດ ( ລວມທັງໝົດ ມີ 29 ບໍລິສັດ );ມາເຖິງປະຈຸບັນທົ່ວແຂວງໄດ້ຊົມໃຊ້ໄຟຟ້າແລ້ວ 679ບ້ານກວມເອົາ 93,78% , ມີໄຟຟ້າຊົມໃຊ້ 47.318 ຄົວເຮືອນ; ວຽກງານເຕັກໂນໂລຊີ ແລະ ການສື່ສານໄດ້ຮັບການປັບປຸງທາງດ້ານປະລິມານ ແລະ ຄຸນນະພາບ, ວ່ອງໄວ ແລະ ທັນສະໄໝ, ມີສັນຍານໂທລະສັບມືຖືກວມເອົາ 94,88%ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ; ລະບົບພື້ນຖານໂຄງລ່າງໄດ້ຮັບການປັບປຸງຍົກລະດັບ ອັນທີ່ພົ້ນເດັ່ນແມ່ນການເປີດນຳໃຊ້ສະໜາມບິນ ໜອງຄ້າງ ເຊິ່ງເປັນປັດໄຈສຳຄັນໃນການພັດທະນາດ້ານການຄົມມະນາຄົມຂົນສົ່ງ,ໄດ້ສຸມໃສ່ຍົກລະດັບເສັ້ນທາງຄົມມະນາຄົມທີ່ສາມາດທຽວໄດ້ 2 ລະດູກວມເອົາ 64,31% ຂອງລວງຍາວເສັ້ນທາງທັງໝົດ ທຽບໃສ່ແຜນການຍັງບໍ່ທັນບັນລຸຄາດໝາຍ 5,89%;ເອົາໃຈໃສ່ຄຸ້ມຄອງລາຍຈ່າຍຢ່າງເຂັ້ມງວດ, ລາຍຮັບງົບປະມານທັງໝົດ 181,77 ຕື້ກີບ ທຽບໃສ່ແຜນດັດແກ້( 150,20 ຕື້ກີບ ) ປະຕິບັດໄດ້121,02%,ລາຍຈ່າຍງົບປະມານປະຕິບັດໄດ້ 664,44 ຕື້ກີບທຽບໃສ່ແຜນດັດແກ້( 670,76ຕື້ກີບ )ປະຕິບັດໄດ້ 99,06%; ໄດ້ສຳຫຼວດວັດແທກຂຶ້ນທະບຽນທີ່ດິນຈຸລະພາກ, ພິສູດຫຼັກຖານ ແລະ ອອກໃບຕາດິນໄດ້ 9.474 ຕອນ ທຽບໃສ່ແຜນການປີປະຕິບັດ 48,75%;ໃນໜຶ່ງທີ່ຜ່ານມາມູນຄ່າການນຳເຂົ້າບັນລຸ 22,71 ລ້ານໂດລາສະຫະລັດ ທຽບໃສ່ແຜນປີລື່ນຄາດໝາຍ 104,41%, ມູນຄ່າການສົ່ງອອກ 40,87 ລ້ານໂດລາສະຫະລັດ ທຽບໃສ່ແຜນປີລື່ນຄາດໝາຍ 112,09%ເກີນດຸນການຄ້າ 18,16 ລ້ານໂດລາສະຫະລັດ;ໄດ້ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທັງໝົດ 447 ໂຄງການ ດ້ວຍທຶນອະນຸມັດຈາກສະພາແຫ່ງຊາດທັງໝົດ178,32 ຕື້ກີບ, ຈັດຕັ້ງປະຕິບັດໄດ້ທັງໝົດ 176,83 ຕື້ກີບ; ທຶນຊ່ວຍເຫຼືອການພັດທະນາມີ 62 ໂຄງການເປັນມູນຄ່າ 187,48 ຕື້ກີບທຽບໃສ່ແຜນການປີປະຕິບັດໄດ້ 103,03%, ການລົງທຶນໂຄງການລົງທຶນທາງພາກເອກະຊົນພາຍໃນ ແລະ ຕ່າງປະເທດທັງໝົດ 44 ໂຄງການ ມີມູນຄ່າການລົງທຶນທັງໝົດ 174,32 ລ້ານໂດລາສະຫະລັດ ທຽບໃສ່ແຜນການປີປະຕິບັດໄດ້ລື່ນຄາດໝາຍ 74,32%.

**3. ດ້ານວັດທະນະທຳ-ສັງຄົມ:**ຕາໜ່າງການສຶກສາໄດ້ຂະຫຍາຍຕົວກວ້າງຂວາງ, ສ້າງໂອກາດໃຫ້ເດັກໄດ້ເຂົ້າຮຽນຢ່າງທົ່ວເຖິງ, ຊີ້ນຳການຮຽນ-ການສອນ, ການສອບເສັງເລື່ອນຫ້ອງ,ຈົບຊັ້ນລະບົບສາມັນສຶກສາ ແລະ ອະຊີວະສຶກສາ, ດຳເນີນການຮຽນ-ການສອນເປັນປົກກະຕິ, ນຳພາການຈັດຕັ້ງປະຕິບັດ ຂອງຂະແໜງການສຶກສາແມ່ນສາມາດບັນລຸ 14 ຕົວຊີ້ວັດ; ວຽກງານສາທາລະນະສຸກໄດ້ຂະຫຍາຍໄປທົ່ວຮາກຖານທ້ອງຖິ່ນ ເຮັດໃຫ້ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທົ່ວເຖິງ ພ້ອມທັງໄດ້ຮັບການປິ່ນປົວສຸຂະພາບດ້ານປະກັນສັງຄົມ, ການຈັດຕັ້ງປະຕິບັດ 11 ຕົວຊີ້ວັດຂອງຂະແໜງການສາລະນະສຸກ ແມ່ນມາສາມາດບັນລຸ10 ຕົວຊີ້ວັດ,ຍັງບໍບັນລຸຄາດໝາຍ 1 ຕົວຊີ້ວັດ (ອັດຕາການເກີດລູກມີແພດຊ່ວຍ) ສ້າງບ້ານສາທາລະນະສຸກແບບຢ່າງ 20 ບ້ານ(ທັງໝົດ 661ບ້ານ),ສາມາດປະກາດແຂວງເປັນແຂວງຢຸດຕິຖ່າຍຊະຊາຍ (ຊຈສ); ສີມືແຮງງານໄດ້ຮັບການພັດທະນາ, ຄຸ້ມຄອງແຮງງານຕ່າງປະເທດເຂົ້າສູ່ລະບຽບກົດໝາຍ,ລະບົບການປະກັນສັງຄົມເພີ່ມຂຶ້ນ, ໄດ້ຮັບເງິນຊ່ວຍເຫຼືອສິງເຄາະໄພພິບັດຕ່າງໆຈາກລັດຖະບານ ແລະ ແຂວງ ເປັນມູນຄ່າ 1,24 ຕື້ກີບ,ໄດ້ເຄື່ອນໄຫວມອບເຄື່ອງບັນເທົາທຸກເປັນມູນຄ່າ 9,38 ຕື້ກີບ, ຮັບບໍລິຈາກເລືອດໄດ້ 842 ຖົງ, ເກັບກູ້ລະເບີດອອກຈາກພື້ນທີ່ການພັດທະນາໄດ້ 121,49 ເຮັກຕາ ແລະ ກຽມສືບຕໍ່ຈັດຕັ້ງປະຕິບັດໂຄງການເກັບກູ້ລະເບີດໄລຍະສອງ; ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໄດ້ຮັບການປັບປຸງ, ປັບປຸງລະບົບໂທລະພາບ,ໂທລະໂຂ່ງ ແລະ ສື່ອອນລາຍ ເພື່ອໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ຕອບໂຕ້ກັບສື່ອອນໄລທີ່ມີການບິດເບືອນແນວທາງໄດ້ທັນການ,ສົ່ງເສີມ ແລະ ປົກປັກຮັກສາວັດທະນະທຳອັນດີງາມຂອງບັນດາເຜົ່າໃນເງື່ອນໄຂໃໝ່,ສະຖານທີ່ທ່ອງທ່ຽວບາງຈຸດໄດ້ຮັບການປັບປຸງດີຂຶ້ນ, ພ້ອມນີ້ກໍ່ໄດ້ກະກຽມຄວາມພ້ອມດ້ານຕ່າງໆ ເພື່ອຮອງຮັບປີທ່ອງທ່ຽວລາວ 2024, ປະກາດບ້ານວັດທະນະທຳໄດ້ 22 ບ້ານ, ປະຈຸບັນທົ່ວແຂວງມີບ້ານວັດທະນະທຳທັງໝົດ 518 ບ້ານ.

**4. ສະພາປະຊາຊົນແຂວງ, ອົງການຕຸລະການ ແລະ ອົງການປົກຄອງ.**

ສະພາປະຊາຊົນແຂວງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນໃນການຄົ້ນຄວ້າ ແລະ ຕົກລົງຮັບຮອງເອົາບັນຫາສຳຄັນພື້ນຖານ ຂອງແຂວງພ້ອມທັງເພີ່ມທະວີເອົາໃຈໃສ່ໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດໜ້າທີ່ຂອງອົງການບໍລິຫານ ແລະອົງການຕຸລາການຢ່າງຕັ້ງໜ້າ ໃຫ້ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍເປັນຕົ້ນ: ຕິດຕາມກວດກາຕາມບົດລາຍງານປະຈຳເດືອນຂອງພາກສ່ວນທີ່ກ່ຽວຂ້ອງ, ລົງເກັບກຳຂໍ້ມູນຕົວຈິງ ແລະຕິດຕາມກວດກາຕາມບັນຫາຫ່າງສຽງສັງຄົມ ຈັດຕັ້ງເຜີຍແຜ່ຜົນສຳເລັດກອງປະຊຸມຕ່າງໆຂອງສະພາແຫ່ງຊາດ ແລະສະພາປະຊາຊົນແຂວງ; ອົງການໄອຍະການປະຊາຊົນແຂວງ ໄດ້ຄົ້ນຄວ້າແກ້ໄຂຄຳຮອງຄຳສະເໜີຂອງອົງການຈັດຕັ້ງລັດ, ສັງຄົມ, ພົນລະເມືອງ;ໄດ້ຮັບສຳນວນຄະດີ 312 ເລື່ອງ, ຄ້າງມາ 14 ເລື່ອງສາມາດຄົ້ນຄວ້າແກ້ໄຂໄດ້ 312 ເລື່ອງເທົ່າກັບ 96%ແລະສານປະຊາຊົນແຂວງໄດ້ມີການປັບປຸງເຄື່ອນໄຫວຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນຢ່າງຕັ້ງໜ້າ, ໄດ້ຫັນເຂົ້າສູ່ຄຸນນະພາບ, ຍຶດຖືກົດໝາຍ ແລະ ຄວາມເປັນຈິງເພື່ອຮັບປະກັນໃຫ້ມີຄວາມໂປ່ງໃສ, ວ່ອງໄວ, ພາວະວິໄສ,ຍຸຕິທຳພ້ອມທັງອຳນວຍຄວາມສະດວກໃຫ້ປະຊາຊົນຊັ້ນຄົນຕ່າງໆສາມາດເຂົ້າເຖິງຂະບວນຍຸຕິທຳໄດ້ເຊິ່ງມີຄະດີທັງໝົດ 357 ເລື່ອງໄດ້ພິຈາລະນາແກ້ໄຂແລ້ວ 334 ເລື່ອງເທົ່າກັບ 93,56%;ວຽກງານຍຸຕິທຳໄດ້ຮັບການປັບປຸງ, ຍົກລະດັບໃຫ້ມີຄວາມເຂັ້ມແຂງ, ປະຕິບັດພາລະບົດບາດ, ສິດໜ້າທີ່ດ້ວຍຄວາມວ່ອງໄວເປັນເຈົ້າການຕິດຕາມກວດກາ ການປະຕິບັດກົດໝາຍ ສາມາດສ້າງບ້ານແບບຢ່າງປະຕິບັດກົດໝາຍໄດ້ 27 ບ້ານມີ 2.947 ຄອບຄົວ, ທົ່ວແຂວງມີບ້ານແບບຢ່າງປະຕິບັດກົດໝາຍທັງໝົດ 609 ບ້ານມີ 42.290 ຄອບຄົວ.ພ້ອມດຽວກັນນີ້ເພື່ອເປັນພື້ນຖານອັນເຂັ້ມແຂງໃຫ້ແກ່ການຫັນໄປສູ່ການຄຸ້ມຄອງລັດດ້ວຍກົດໝາຍ, ປັບປຸງກົງຈັກອຳນາດລັດຕາມທິດກະທັດຮັດ, ບໍ່ຊໍ້າຊ້ອນກ້າວກ່າຍກັນ, ແກ້ໄຂໄດ້ຂອດການບໍລິຫານ-ບໍລິການຮັບໃຊ້ປະຊາຊົນ ວ່ອງໄວຂຶ້ນພ້ອມນີ້ກໍ່ໄດ້ປັບປຸງກົງຈັກການຈັດຕັ້ງ ໂຮມເອົາບາງພະແນກເຂົ້າກັນ ແລະ ໂຮມບັນດາຂະແໜງການທີ່ມີວຽກງານຄ້າຍຄືກັນ ເພື່ອເຮັດໃຫ້ລະບົບການຈັດຕັ້ງ-ບໍລິຫານມີກົງຈັກການຈັດຕັ້ງໜ້ອຍລົງ ແລະ ຫັດກຸມ, ມີປະສິດທິພາບພ້ອມທັງຈັດວາງຊັບຊ້ອນບາງຕໍາແໜ່ງງານໃຫ້ສອດຄ່ອງ ແລະ ເໝາະສົມ.

**5. ແນວລາວສ້າງຊາດ,ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ:** ໄດ້ເປັນເຈົ້າການເຕົ້າໂຮມຄວາມສາມັກຄີບັນດາເຜົ່າ, ຊັ້ນຄົນ ແລະ ສາສະໜາໃຕ້ການນຳພາຂອງພັກ, ເປັນໃຈກາງເຕົ້າໂຮມຄຳຄິດຄຳເຫັນຂອງສັງຄົມທີ່ມີຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ນຳເອົາແນວທາງ, ນະໂຍບາຍລົງເຜີຍແຜ່ສຶກສາອົບຮົມປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ, ໄດ້ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນສຳເລັດ ແລະ ພ້ອມທັງເຂົ້າຮ່ວມກອງປະຊຸມໃຫຍ່ສູນກາງແນວລາວສ້າງຊາດ, ສ້າງບ້ານສາມັກຄີປອງດອງໄດ້ 693 ບ້ານ ແລະ ປະກາດເມືອງສາມັກຄີປອງດອງໄດ້ 10ເມືອງ;ຄະນະບໍລິຫານງານຊາວໜຸ່ມໄດ້ເອົາໃຈໃສ່ສຶກສາອົບຮົມຊາວໜຸ່ມ-ໄວໜຸ່ມໃຫ້ມີນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນ ພ້ອມນີ້ ແຂວງຫົວພັນ ໄດ້ຮັບນາມມະຍົດເປັນແຂວງ 4 ບຸກ;ແມ່ຍິງບັນດາເຜົ່າໄດ້ເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍ ຂອງພັກ-ລັດ, ເປັນເຈົ້າການຜັນຂະຫຍາຍແຜນພັດທະນາແມ່ຍິງ ແລະເດັກນ້ອຍມີສະຖາບັນການເງິນຈຸລະພາກມີທຶນໝູນວຽນ 4.129.030.898 ກີບ ພ້ອມນີ້ແຂວງຫົວພັນ ໄດ້ຮັບຮອງເປັນແຂວງແມ່ຍິງ 3 ດີ ຄັ້ງທີ່ I ປະຈຳປີ 2023;ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງຊາວຜູ້ອອກແຮງງານ, ປະກາດເມືອງ 5 ເປັນເຈົ້າໄດ້ 10 ເມືອງ ແລະ 51 ຮາກຖານ; ຖັນແຖວນັກຮົບເກົ່າໄດ້ເປັນແບບຢ່າງໃນການປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອປະຕິວັດ, ສຶກສາອົບຮົມແລະ ປຸກລະດົມໃຫ້ຄົນຮຸ່ນໜຸ່ມປະກອບສ່ວນເຂົ້າໃນການປະຕິບັດແນວທາງໂຍບາຍ ຂອງພັກ-ລັດ, ປະກອບສ່ວນຕໍ່ວຽກງານ ປກຊ-ປກສ ແລະ ຕ້ານກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະແລະ ພວກຄົນບໍ່ຫວັງດີ.

**6.ວຽກງານພົວພັນຮ່ວມມືກັບຕ່າງປະເທດ:** ໄດ້ເປັນເສນາທິການໃນການຄົ້ນຄວ້າ, ກະກຽມບັນດາເນື້ອໃນ, ພິທີການ ແລະ ການປະສານງານ ໃຫ້ການນຳແຂວງ ໄດ້ໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ຕ່າງປະເທດໄດ້ທັງໝົດ 25 ຄະນະ; ໄດ້ຮັບຕ້ອນຄະນະຜູ້ແທນຕ່າງປະເທດທີ່ມາເຮັດວຽກຢູ່ແຂວງຫົວພັນໄດ້ ທັງໝົດ 35 ຄະນະ, ປັດຈຸບັນມີບັນດາໂຄງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານຢູ່ແຂວງຫົວພັນ ມີ

33ໂຄງການ ໃນນີ້ສຳເລັດ 6 ໂຄງການ, ໂຄງການທີ່ສືບຕໍ່ ກຳລັງຈັດຕັ້ງປະຕິບັດມີ 18 ໂຄງການ, ມີໂຄງການສະເໜີ 9ໂຄງການ (ອະນຸມັດແລ້ວ 5 ໂຄງການ, ຍັງລໍຖ້າອະນຸມັດ 4 ໂຄງການ).

**7.ວຽກງານກໍ່ສ້າງຮາກຖານການເມືອງແລະ ວຽກງານ3ສ້າງ:**ຄະນະພັກໄດ້ສຸມໃສ່ລົງຕິດຕາມ-ຊຸກຍູ້ຫັນເອົາພະນັກງານລົງນຳພາ-ຊີ້ນຳຢູ່ 62 ບ້ານເປົ້າໝາຍທີ່ແຂວງໄດ້ຮັບຮອງໂດຍສະເພາະແມ່ນໃຫ້ເມືອງຈັດສົ່ງພະນັກງານທີ່ໄດ້ກຳນົດໃນແຜນສ້າງພະນັກງານນຳພາ-ຄຸ້ມຄອງລົງກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍ ໄດ້ເຮັດໃຫ້ປະຊາຊົນບັນດາເຜົ່າມີການປ່ຽນແປງດ້ານແນວຄິດ, ມີການປະກອບສ່ວນເຂົ້າຮ່ວມຂະບວນການ, ມີການພັດທະນາຊີວິດການເປັນຢູ່ດີຂຶ້ນ, ປະກົດການຫຍໍ້ທໍ້ພາຍໃນບ້ານມີທ່າຫຼຸດລົງ ມາເຖິງປະຈຸບັນແຕ່ລະເມືອງໄດ້ສຳເລັດບາດກ້າວທີ່ 4 ແລະ ພວມດຳເນີນຢູ່ບາດກ້າວທີ່ 5 ພ້ອມນີ້ຍັງໄດ້ຂະຫຍາຍບ້ານຈຸສຸມ ຂອງເມືອງຕື່ມອີກຈຳນວນໜຶ່ງເຊັ່ນ: ເມືອງຊຽງຄໍ້, ວຽງໄຊ, ສົບເບົາ; ວຽກງານ 3 ສ້າງພາກສ່ວນກ່ຽວຂ້ອງໄດ້ລົງຊຸກຍູ້-ຕິດຕາມໂດຍສະເພາະການນຳເອົານິຕິກຳລົງຈັດຕັ້ງເຊື່ອມຊຶມ ໃຫ້ປະຊາຊົນຮັບຮູ້ເຂົ້າໃຈແນວທາງ ຂອງພັກ-ລັດ, ໄດ້ປັບປຸງລະບົບການເມືອງຢູ່ຂັ້ນຮາກຖານມີຄວາມເຂັ້ມແຂງຕາມທິດ 3 ສ້າງ ເຊິ່ງສະແດງອອກ ລະບົບການເມືອງຂັ້ນຮາກຖານໄດ້ຮັບການປັບປຸງໄປຕາມທິດ 3 ສ້າງ, ອົງການປົກຄອງບ້ານໄດ້ຈັດຕັ້ງຕາມ 5 ໜ່ວຍງານ ແລະ ບັນດາໜ່ວຍງານກໍ່ໄດ້ເຄື່ອນໄຫວປະຕິບັດພາລະບົດບາດ, ສິດໜ້າທີ່ຂອງຕົນທ່ອງທ່າທີ່ດີຂຶ້ນ.

**8.ດ້ານການນຳພາ-ຊີ້ນຳວຽກງານການເມືອງ-ແນວຄິດ:**ຄະນະນຳທຸກຂັ້ນໄດ້ສືບຕໍ່ເອົາໃຈໃສ່ເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າດ້ວຍການນຳເອົາແນວທາງ, ນະໂຍບາຍ ແລະ ບັນດານິຕິກຳຕ່າງໆຂອງພັກ-ລັດຈັດຕັ້ງເຊື່ອມຊຶມແລະຜັນຂະຫຍາຍເຊັ່ນວ່າ:ການຈັດຕັ້ງເຊື່ອມຊຶມມະຕິ 9,10, ມະຕິກາງສະໄໝຂອງຄະນະບໍລິຫານງານພັກແຂວງ, ມະຕິ 11 ຂອງອົງຄະນະພັກແຂວງສະໄໝທີ X ແລະ ມະຕິ 5,6, ມະຕິຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກສະໄໝທີ່ XI, ໂຄສະນາປາຖະກະຖາມູນເຊື້ອຂອງພັກຂອງຊາດໃຫ້ແກ່ເປົ້າໝາຍຕ່າງໆ ມີຈຳນວນຄົນເຂົ້າຮ່ວມທັງໝົດ 55.691 ຄົນ, ຍິງ 19.862ຄົນພ້ອມນັ້ນຍັງໄດ້ຈັດຕັ້ງປະຕິບັດມະຕິສະບັບ ເລກທີ 206/ກມສພ ວ່າດ້ວຍການເພີ່ມທະວີຍົກສູງຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດໃນໄລຍະໃໝ່ ແລະ ເລກທີ 25/ກມສພ ວ່າດ້ວຍການເພີ່ມທະວີການນຳພາຂອງພັກຕໍ່ວຽກງານວັດທະນະທຳໃນໄລຍະໃໝ່ຕິດພັນກັບ 2 ວາລະແຫ່ງຊາດ ແລະ ເອກະສານອື່ນໆໄດ້ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈແລະຍັງຍຶດໝັ້ນແນວທາງນະໂຍບາຍຂອງພັກເຮົາ, ມີຄວາມເປັນເອກະພາບກັບການນຳພາ-ຊີ້ນຳຂອງອົງຄະນະພັກແຂວງ, ມີແນວຄິດຮັກຊາດ ແລະຮັກບ້ານເກີດເມືອງນອນຂອງຕົນ,ເຄົາລົບລະບຽບ, ກົດໝາຍ, ປະຕິບັດສິດ ແລະ ພັນທະພົນລະເມືອງຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ເຊິ່ງສະແດງອອກຄື:ຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງໄດ້ຮັບການຍົກສູງຂຶ້ນ, ການດຳລົງຊີວິດໄດ້ຄ່ອຍໆຫັນປ່ຽນຈາກອັນເກົ່າໄປສູ່ອັນໃໝ່ມີຕົວແບບດ້ານຕ່າງໆເພີ່ມຂຶ້ນ.

ທົ່ວແຂວງມີ 10 ອົງຄະນະພັກເມືອງ 2 ອົງຄະນະພັກກົມກອງ, ມີ 157 ຮາກຖານພັກ, ມີ 1,211ໜ່ວຍພັກ ໃນນີ້ເພີ່ມຂຶ້ນ 62 ໜ່ວຍພັກ, ມີສະມາຊິກພັກທັງໝົດ 20,894ສະຫາຍ, ຍິງ 5,087 ສະຫາຍ ເພີ່ມຂຶ້ນ 226 ສະຫາຍ, ມີໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນມີ 860 ໜ່ວຍ, ປະຈຸບັນເກັບເງິນສະຕິພັກໄດ້ທັງໝົດ 168,300,222 ກີບ; ພະນັກງານ-ລັດຖະກອນໄປຍົກລະດັບທິດສະດີ-ການເມືອງທັງໝົດ 111ສະຫາຍ, ຍິງ 20ສະຫາຍ ພ້ອມນີ້ກໍ່ໄດ້ເລືອກເຟັ້ນ ແລະ ຈັດສົ່ງພະນັກງານສືບທອດປ່ຽນແທນໄປກໍ່ສ້າງດ້ານວິຊາສະເພາະໄລຍະສັ້ນ, ໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດໄດ້ 31 ຄົນ, ຍິງ 6 ຄົນ; ປະຕິບັດນະໂຍບາຍອູດໜູນບຳນານ ໃຫ້ພະນັກງານຂັ້ນຕ່າງໆ; ປັບປຸງກົງຈັກການຈັດຕັ້ງແຕ່ຂັ້ນແຂວງ ຮອດຂັ້ນເມືອງນັບທັງສາຍຕັ້ງ ແລະ ສາຍຂວາງໃນການຈັດວາງ, ຊັບຊ້ອນ, ເລື່ອນຊັ້ນ, ເລື່ອນຕຳແໜ່ງນຳພາ-ຄຸ້ມຄອງຂັ້ນຕ່າງໆ ຕາມຄວາມຮູ້ຄວາມສາມາດ ແລະ ວິຊາສະເພາະ,

ຮັບປະກັນຫຼັກການທັນເປັນໜຸ່ມ,ມີໂຄງປະກອບເພດ, ເຜົ່າເພີ່ມຂຶ້ນ; ສຳເລັດການຂຶ້ນແຜນພະນັກງານນຳພາຄຸ້ມຄອງຂັ້ນສູນກາງຄຸ້ມຄອງ.

ໄດ້ຕິດຕາມການຜັນຂະຫຍາຍຈັດຕັ້ງປະຕິບັດກົດລະບຽບຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງ XI ຂອງພັກ ແລະ ມະຕິ X ຂອງອົງຄະນະພັກແຂວງ, ຕິດຕາມການກວດກາເປັນປົກກະຕິ ແລະ ການກວດກາຕາມຂໍ້ຕົກລົງຕາມການມອບໝາຍ, ກວດກາການປັບປຸງກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ທາງສຽງຂອງສັງຄົມຕໍ່ຄະນະພັກ ແລະ ສະມາຊິກພັກ;ຄວາມຮັບຜິດຊອບ ແລະ ຄວາມເປັນເອກະພາບຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນຕໍ່ກັບການຕົກລົງ ແລະຈັດຕັ້ງປະຕິບັດແກ້ໄຂຜົນຂອງການກວດກາໃຫ້ທັນການ, ເຂັ້ມງວດ, ສັກສິດຕາມກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບຂອງລັດເປັນຕົ້ນ:ການປະຕິບັດວິໄນຕໍ່ຄະນະພັກ, ສະມາຊິກພັກ, ໃນໄລຍະຜ່ານມາມີສະມາຊິກພັກຖືກປະຕິບັດວິໄນທັງໝົດໃນປີ 2023 ມີຈຳນວນ 39 ສະຫາຍ, ຍິງ 8 ສະຫາຍ,ຂັ້ນກ່າວເຕືອນ 37 ສະຫາຍ, ຍິງ 7 ສະຫາຍ, ປົດຕຳແໜ່ງ 2 ສະຫາຍ,ຍິງ 1 ສະຫາຍ.ເຫດຜົນການປະຕິບັດວິໄນແມ່ນ: ຂາດສະຕິຕໍ່ການຈັດຕັ້ງ, ລະເມີດກົດລະບຽບພັກ, ກົດໝາຍສໍ້ລາດບັງຫຼວງ, ມົ້ວສຸມຢາເສບຕິດ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ ກໍ່ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ແກ້ໄຂຄື:

1. ການສຶກສາອົບຮົມການເມືອງ-ແນວຄິດ ຂອງຄະນະພັກແຕ່ລະຂັ້ນຍັງເຮັດໄດ້ບໍ່ທັນເລິກເຊິ່ງ, ບໍ່ທັນແທດເໝາະກັບຄວາມສາມາດ ແລະ ທ່າແຮງບົ່ມຊ້ອນ ເພື່ອນຳເອົາຜົນປະໂຫຍດມາໃຫ້ແກ່ປະຊາຊົນຍັງຊັກຊ້າ; ແນວຄິດ, ຄວາມກະຕືລືລົ້ນ, ຄວາມຕັ້ງໃຈບຸກບືນຕໍ່ໜ້າທີ່ຄວາມຮັບຜິດຊອບຕໍ່ວຽກງານ ຂອງພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດຈຳນວນໜຶ່ງລຸດລົງ, ປະສິດທິຜົນຂອງງານບໍ່ສູງ, ມີແນວຄິດເອື້ອຍອີງ, ລໍຖ້າຄຳສັ່ງ, ຄວາມບຸກບືນຜ່ານຜ່າຄວາມຫຍຸ້ງຍາກກໍ່ຫຼຸດລົງ, ສັງຄົມເກີດມີປະກົດການຫຍໍ້ທໍ້ເຊັ່ນ: ຂີ້ລັກ, ງັດແງະ, ຫຼິ້ນການພະນັນ, ລະເມີດກົດໝາຍ, ຮີດຄອງປະເພນີ ແລະ ອື່ນໆ.

2. ການນຳພາ-ຊີ້ນຳຂອງຄະນະພັກແຕ່ລະຂັ້ນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບບໍ່ທັນ ໄດ້ດີເທົ່າທີ່ຄວນ, ຄວາມເປັນເຈົ້າການ, ຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງກຳລັງດັ່ງກ່າວ ຢູ່ບາງກົມກອງ ແລະ ຮາກຖານບໍ່ທັນກັບສະພາບການ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ດ້ານການແກ້ໄຂບັນຫາຢາເສບຕິດຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ, ຍັງເກີດມີປະກົດການຫຍໍ້ທໍ້ບາງດ້ານມີທ່າອ່ຽງເພີ່ມຂຶ້ນເຊັ່ນ: ການເສບ-ຊື້ຂາຍຢາເສບຕິດ, ຢາສູບໄຟຟ້າ, ນໍ້າກະທ່ອມມີການມົ້ວສູມເຂົ້າໃນໝູ່ນັກຮຽນ, ຊາວໜຸ່ມ-ໄວໜຸ່ມ,ຍາວວະຊົນ, ອຸປະຕິເຫດຕາມທ້ອງຖະໜົນ, ການລັກລອບຂຸດຄົ້ນຂຸດພະຍາກອນທຳມະຊາດ, ການນຳໃຊ້ອາວຸດລ່າເນື້ອ, ສາສະໜາທີ່ບໍ່ຖືກຕ້ອງ ແລະ ອື່ນໆ.

3.ຈັງວະການເຕີບໂຕທາງດ້ານເສດຖະກິດບໍ່ທັນແຂງແຮງ, ການຊອກ ແລະ ກຳນົດຖານລາຍຮັບທີ່ໝັ້ນຄົງບໍ່ທັນມີຈຸດສຸມ, ການນຳໃຊ້ 5 ທ່າແຮງເຂົ້າໃນການພັດທະນາເສດຖະກິດ-ສັງຄົມບໍ່ທັນດີ, ການສ້າງຈຸດສຸມບໍ່ທັນກາຍເປັນຕົວແບບ ແລະ ການຂະຫຍາຍຕົວແບບຍັງເຮັດໄດ້ໜ້ອຍ, ການແກ້ໄຂຄວາມທຸກຍາກບໍ່ບັນລຸຕາມຄາດໝາຍຍັງມີລັກສະນະເພີ່ມຂຶ້ນ;ການຄຸ້ມຄອງລາຄາສິນຄ້າບາງລາຍການຕາມທ້ອງຕະຫຼາດຍັງບໍ່ທັນໄດ້ດີ, ການຄຸ້ມຄອງລາຍຮັບ-ລາຍຈ່າຍຍັງມີການຮົ່ວໄຫຼຢູ່ບາງຂອດ, ການສ້າງກຸ່ມການຜະລິດຍັງມີໜ້ອຍບໍ່ທັນເປັນສັງຄົມການຜະລິດສ່ວນຫຼາຍຍັງຊົມໃຊ້ຈາກການນຳເຂົ້າ ຍັງບໍ່ທັນໄປຕາມວາລະແຫ່ງຊາດວາງອອກ, ການນຳໃຊ້ພື້ນຖານໂຄງລ່າງທີ່ມີແລ້ວ ເພື່ອນຳໃຊ້ໃຫ້ເກີດປະໂຫຍດສູງສຸດແກ່ປະຊາຊົນ ຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ, ການຄຸ້ມຄອງບັນດາໂຄງການເຊັ່ນ: ຂຸດຄົ້ນແຮ່ທາດບໍ່ທັນເຂັ້ມງວດຕາມລະບຽບກົດໝາຍຍັງມີຫຼາຍບັນຫາເກີດຂຶ້ນທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

4.ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍບໍ່ທັນເຂັ້ມງວດ ແລະ ສັກສິດ, ລະບົບການເມືອງຢູ່ຂັ້ນຮາກຖານມີການຈັດຕັ້ງຄົບຊຸດ ແຕ່ຄຸນນະພາບໃນການນໍາພາ-ຊີ້ນໍາການບໍລິຫານລັດຫຼາຍບ້ານຍັງບໍ່ທັນເຂັ້ມແຂງເຊັ່ນ: ຄະນະພັກ, ອໍານາດການປົກຄອງ, ບັນດາອົງການຈັດຕັ້ງມະຫາຊົນ ເຖິງວ່າໄດ້ຮັບການປັບປຸງ ແລະ ເຄື່ອນໄຫວ ແຕ່ການຈັດຕັ້ງຮາກຖານຈໍານວນໜຶ່ງເຄື່ອນໄຫວບໍ່ແຂງແຮງ, ການເຕົ້າໂຮມຄວາມສາມັກຄີບັນດາເຜົ່າ, ຊັ້ນຄົນ, ສາສະໜາບາງບ້ານ, ບາງເຂດບໍ່ໜັກແໜ້ນເທົ່າທີ່ຄວນ, ຄວາມເປັນແບບຢ່າງບໍ່ສູງ.

5.ວຽກງານກໍ່ສ້າງຮາກຖານການເມືອງ ແລະ ວຽກງານ 3 ສ້າງການລົງກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍ ໃນບັນດາບ້ານຈຸດສຸມຂອງແຂວງ ແລະ ສູນກາງເຖິງວ່າໄດ້ຈັດຕັ້ງລົງຕາມແຜນ ແຕ່ບໍ່ທັນມີປະສິດທິຜົນແທ້, ບັນຫາເກີດຂຶ້ນຢູ່ຮາກຖານ ເປັນຕົ້ນການພັດທະນາເສດຖະກິດ-ສັງຄົມຊັກຊ້າ, ຄວາມທຸກຍາກຂອງປະຊາຊົນຍັງກວມອັດຕາສ່ວຍຫຼາຍ, ລະບົບການເມືອງຮາກຖານໄດ້ຮັບການປັບປຸງໄປຕາມທິດ 3 ສ້າງແລ້ວ ແຕ່ການເຄື່ອນໄຫວບໍ່ແຂງແຮງ, ການສ້າງບ້ານພັດທະນາ, ສ້າງຈຸດສຸມເປັນຕົວເມືອງນ້ອຍໃນຊົນນະບົດ, ການສ້າງເມືອງເຂັ້ມແຂງຮອບດ້ານ, ການປະກາດເມືອງພົ້ນທຸກບໍ່ໄດ້ຕາມຄາດໝາຍ.

**II. ທິດທາງ ແລະ ຈຸດສຸມໃນການນໍາພາ-ຊີ້ນໍາວຽກງານ3ເດືອນຕົ້ນປີ(1-2-3) 2024ດັ່ງນີ້.**

ເພື່ອສືບຕໍ່ນໍາພາ-ຊີ້ນໍາຈັດຕັ້ງປະຕິບັດມະຕິ X ອົງຄະນະພັກແຂວງຕາມຄໍາຂວັນທີ່ວ່າ:*ປັບປຸງກໍ່ສ້າງພັກໃຫ້ປອດໃສ,ເຂັ້ມແຂງ, ໜັກແໜ້ນ, ເພີ່ມທະວີຄວາມສາມັກຄີປວງຊົນບັນດາເຜົ່າ, ເອົາໃຈໃສ່ຄຸ້ມຄ້ອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ຕັ້ງໜ້າພັດທະນາແຂວງຫົວພັນໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກຕາມທິດສີຂຽວ ແລະ ຍືນຍົງ*,ສືບຕໍ່ຊີ້ນໍາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ IX ເປັນປີທີ 4,ໂດຍເຫັນໄດ້ບົດຮຽນທີ່ຜ່ານມາ; ທັງເຫັນໄດ້ຈຸດອ່ອນຄົງຄ້າງ, ສາເຫດທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ, ດັ່ງນັ້ນ 3 ເດືອນຕົ້ນປີ 2024 ນີ້ຄະນະບໍລິຫານງານພັກແຂວງໄດ້ກໍານົດວຽກງານ, ຄາດໝາຍ ແລະ ຈຸດສຸມເພື່ອນໍາພາ-ຊີ້ນໍາຕາມແຜນດໍາເນີນງານທີ່ຄະນະບໍລິຫານງານພັກແຂວງສະໄໝທີ X ວາງອອກ (ມະຕິ 2 ສະໄໝທີ X) ເຊິ່ງລະອຽດມີຄື:

1.ສືບຕໍ່ນໍາພາຈັດຕັ້ງປະຕິບັດບັນດາວຽກງານທີໄດ້ຮັບຮອງເອົາໃນມະຕິ 11ສະໄໝທີ X ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາເຂົ້າໃນຂົງເຂດວຽກງານຂອງຕົນໃຫ້ມີຜົນສໍາເລັດຕາມແຜນການທີວາງໄວ້.

2.ນໍາພາກວດກາຕິດຕາມຊຸກຍູ້ການເກັບກູ້ຜົນຜະລິດລະດູປີ, ການຊື້-ຂາຍຜົນຜະລິດທີ່ເປັນເປັນສິນຄ້າ ໃຫ້ຮັບປະກັນຜົນປະໂຫຍດຂອງປະຊາຊົນ, ສືບຕໍ່ຊຸກຍູ້ການກະກຽມຄວາມພ້ອມໃຫ້ແກ່ການຜະລິດລະດູແລ້ງໃຫ້ທັນເວລາ ແລະ ມີຈໍານວນເນື້ອທີ່ປູກໃນລະດູແລ້ງຫຼາຍກວ່າປີຜ່ານມາເຊັ່ນ: ນາແຊງ, ໝາກແຕງ, ໝາກໂມ, ຜັກບົ່ວ-ທຽມ ແລະ ອື່ນໆ...

3. ທຸກການຈັດຕັ້ງແຕ່ລະຂັ້ນຕ້ອງກວດກາສະຫຼຸບປະເມີນຄືນການຈັດຕັ້ງປະຕິບັດບັນດາວຽກງານ, ໂຄງການ, ຕົວເລກ, ຄາດໝາຍ, ຢູ່ໃນມະຕິ 10 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ່ IX ຂອງແຂວງເພື່ອໃຫ້ຮູ້ວ່າວຽກງານຂອງຕົນເຮັດໄດ້ຫຍັງ ແລະ ຍັງຄ້າງບັນຫາຫຍັງ, ຈະສືບຕໍ່ ແລະ ໃຫ້ສໍາເລັດຕາມຄາດໝາຍແນວໃດ.

4.ເພີ່ມທະວີການນໍາພາຂອງຄະນະພັກເຂົ້າໃນການດໍາເນີນກອງປະຊຸມ3ຂັ້ນໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຫຼັກການນິຕິກໍາທີ່ຂັ້ນເທິງວາງອອກຢ່າງເຂັ້ມງວດ ພ້ອມນີ້ສືບຕໍ່ເລືອກເຟັ້ນເອົາພະນັກງານທີ່ຖືກເງື່ອນໄຂມາດຖານລົງຮາກຖານທ້ອງຖິ່ນຕາມຫຼັກການມີເຂົ້າ-ມີອອກ-ມີຂຶ້ນມີລົງ ແລະ ຕາມແຜນສ້າງພະນັກງານໃນຂະບວນການຕົວຈິງ.

5.ເພີ່ມທະວີການເຮັດວຽກງານການເມືອງ-ແນວຄິດໃຫ້ເລິກເຊິ່ງ, ເຖິງທ່ອງ ແລະ ມີຄວາມຮັບຜິດຊອບໃນການເຂົ້າຮ່ວມ. ພ້ອມທັງເອົາໃຈໃສ່ນໍາພາການເມືອງ-ແນວຄິດໃຫ້ທົ່ວເຖິງມີຈຸດສູມມີເປົ້າໝາຍເລິກເຊິ່ງ, ສ້າງຄວາມຕື່ນຕົວເປັນເຈົ້າການໃຫ້ແກ່ປະຊາຊົນບັນດາເຜົ່າ, ຊັ້ນຄົນ, ປຸກລະດົມມວນຊົນທົ່ວສັງຄົມ ເຂົ້າຮ່ວມຂະບວນການສະຫຼອງວັນສໍາຄັນເຊັ່ນ: ວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ ແລະ ວັນເກີດຂອງປະທານ ຄໍາໄຕ ສີພັນດອນຄົບຮອບ 100 ປີ ແລະ ປີທ່ອງທ່ຽວລາວ 2024 ແລະ ອື່ນໆໃຫ້ມີບັນຍາກາດຄຶກຄື້ນ.

6.ເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນຕໍ່ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ເຮັດໃຫ້ແຂວງຫົວພັນຂອງພວກເຮົາມີຄວາມສະຫງົບ-ໝັກແໜ້ນ ດ້ວຍການຕິດຕາມຊຸກຍູ້ໃຫ້ກໍາລັງປະກອບອາວຸດແຕ່ລະຂັ້ນມີການເຄື່ອນໄຫວຕາມສິດໜ້າທີ່, ພາລະບົດບາດຢ່າງເຕັມສ່ວນ.

7. ສືບຕໍ່ສ້າງຂະບວນການ, ຄວາມເປັນເຈົ້າໃຫ້ປະຊາຊົນ ແລະ ຂະບວນການສໍາຄັນຂອງຊາດ ຂອງພັກຕິດພັນກັບການທ່ອງທ່ຽວ ເພື່ອຕ້ອນຮັບປີທ່ອງທ່ຽວລາວ ໃຫ້ມີຂະບວນຟົດຟື້ນ.

**III.ມາດຕະການໃນການຈັດຕັ້ງປະຕິບັດ.**

1.ໃຫ້ບັນດາສະຫາຍຄະນະບໍລິຫານງານພັກແຂວງທຸກສະຫາຍເອົາໃຈໃສ່ຄົ້ນຄວ້າເລິກເຊິ່ງ-ເປັນເຈົ້າການເຜີຍແຜ່-ເຊື່ອມຊຶມທັງນໍາເອົາເນື້ອໃນໄປຜັນຂະຫຍາຍເຂົ້າໃນວຽກງານຄວາມຮັບຜິດຊອບຂອງຕົນ.

2. ບັນດາພະແນກການ, ກົມກອງ, ອົງການທຽບເທົ່າເຊື່ອມຊຶມແລ້ວຕ້ອງຫັນເອົາແຜນການນີ້ເປັນອັນລະອຽດໂດຍຕິດພັນກັບບັນດາຕົວເລກຄາດໝາຍທີ່ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ IX ຂອງແຂວງເຊິ່ງແມ່ນຕົວເລກຄາດໝາຍຕົວຊີ້ວັດທີ່ແຕ່ລະພະແນກການ, ກົມກອງ, ອົງການທຽບເທົ່າໄດ້ຮັບຮອງເອົາແລ້ວ.

3.ໃຫ້ແຕ່ລະພາກສ່ວນຈະແມ່ນອົງການພັກ, ພາກສ່ວນອົງການປົກຄອງ ຂອງລັດຕ້ອງຖືສໍາຄັນ,ທັງແມ່ນຄວາມຮັບຜິດຊອບຂອງທຸກພາກສ່ວນຕໍ່ລະບອບສ່ອງແສງ, ລະບອບລາຍງານໃຫ້ປົກກະຕິ, ໃຫ້ຖືກຕ້ອງ, ຊັດເຈນເຊື່ອຖືໄດ້.

4.ມອບໃຫ້ຄະນະໂຄສະນາອົບຮົມແຂວງ, ຄະນະຈັດຕັ້ງແຂວງ ແລະ ຄະນະກວດກາພັກແຂວງເປັນເຈົ້າການຊຸກຍູ້, ຕິດຕາມ, ກວດກາ, ປະເມີນການຈັດຕັ້ງປະຕິບັດແຜນການໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີປະສິດທິຜົນ.

ຫົວພັນ, ວັນທີ      ມັງກອນ 2024

**ຄະນະບໍລິຫານງານພັກແຂວງຫົວພັນ**

**ເລຂາ**